SurveyWorks!

# ຈົດໝາຍໃຫ້ຂໍ້ມູນແກ່ພໍ່ແມ່/ຜູ້ປົກຄອງໃນວຽກງານສຳຫຼວດ

ຮຽນ ພໍ່ແມ່/ຜູ້ປົກຄອງ ທີ່ຮັກແພງ,

The Rhode Island Department of Elementary and Secondary Education (ພະແນກສຶກສາຂອງເກາະຣູດ໌) ໄດ້ເຮັດວຽກຮ່ວມກັບໂຮງຮຽນປະຈຳທ້ອງຖິ່ນ ແລະ ປະຈຳເມືອງຂອງທ່ານ ເພື່ອ ດຳເນີນການທົດສອບການສຳຫຼວດນັກຮຽນຂອງລັດ, SurveyWorks (ວຽກສຳຫຼວດ). WestEd (ເວດສ໌ເອດ) ເຊິ່ງແມ່ນຕົວແທນຂອງພວກເຮົາ ຈະບໍລິຫານການສຳຫຼວດອອນລາຍນ໌ ເພື່ອຊ່ວຍໃຫ້ໂຮງຮຽນປະຈຳທ້ອງຖິ່ນ, ໂຮງຮຽນປະຈຳເມືອງ, ແລະ ພະແນກສຶກສາຂອງເກາະຣູດ໌ ໃນການປັບປຸງໂຮງຮຽນຂອງພວກເຮົາ ແລະ ສະໜັບສະໜູນການສິດສອນ ແລະ ການຮ່ຳຮຽນທີ່ດີກ່ວາສຳລັບນັກຮຽນໝົດທຸກຄົນໃນ Rhode Island (ເກາະຣູດ໌). ຂໍ້ມູນທີ່ຮວບຮວມຈາກການສຳຫຼວດຄັ້ງນີ້ ຈະຊ່ວຍໃຫ້ເຈົ້າໜ້າທີ່ທາງດ້ານການສຶກສາທີ່ກຳລັງເຮັດວຽກໃນເກາະຣູດ໌ ສາມາດປັບປຸງຫລັກສູດ, ບັນຍາກາດຂອງໂຮງຮຽນ, ແລະ ໂປຣແກຣມອື່ນໆທີ່ຢູ່ໃນໂຮງຮຽນໃຫ້ດີຂຶ້ນ. ໂຮງຮຽນ, ເມືອງ, ພໍ່ແມ່, ແລະ ກຸ່ມທີ່ສະໜັບສະໜູນໂຮງຮຽນ ສາມາດນຳໃຊ້ຜົນໄດ້ຮັບຈາກການສຳຫຼວດ ເພື່ອເຂົ້າໃຈເຖິງບັນຫາ ແລະ ເງື່ອນໄຂ ທີ່ພາໃຫ້ນັກຮຽນສາມາດປະສົບຜົນສຳເລັດໂດຍນຳໃຊ້ສັກກາຍະພາບທີ່ເຕັມປ່ຽມຂອງພວກເຂົາ.

ນັກຮຽນໃນ Rhode Island (ເກາະຣູດ໌) ທຸກຄົນທີ່ຢູ່ໃນເກຣດ 4 ຫາ 12 ໄດ້ຮຽກຮ້ອງໃຫ້ປະກອບສ່ວນເຂົ້າໃນການສຳຫຼວດອອນລາຍນ໌ ຄັ້ງນີ້ຢູ່ໂຮງຮຽນຂອງພວກເຂົາ. ຈະບໍ່ມີການສອບເສັງທາງດ້ານວິຊາການ ຫຼື ການທົດສອບທາງດ້ານກາຍະພາບ ໃນການສຳຫຼວດແຕ່ຢ່າງໃດ ແລະ ນັກຮຽນຈະໃຊ້ເວລາປະມານ 20 ຫາ 25 ນາທີ ຈຶ່ງຈະສຳເລັດ. ການເຂົ້າຮ່ວມຂອງລູກຫຼານທ່ານໃນການສຳຫຼວດ ແມ່ນເປັນແບບສະໝັກໃຈ ແລະ ນິຣະນາມ; ຈະບໍ່ມີການຮວບຮວມ ຫຼື ບັນທຶກຊື່ເກັບໄວ້. ສາມາດເຂົ້າເບິ່ງການສຳຫຼວດໄດ້ທີ່ເວັບໄຊທ໌ www.surveyworks.ride.ri.gov ແລະ ຢູ່ໃນຫ້ອງການຂອງໂຮງງານ.

ການສຳຫລວດຈະສອບຖາມຄຳຖາມກ່ຽວກັບ:

- ວິທະຍາໄລ ແລະ ຄວາມພ້ອມໃນການປະກອບອາຊີບ
- ບັນຍາກາດຂອງໂຮງຮຽນ
- ຄວາມຄາດຫວັງຂອງຄູ
- ການສະໜັບສະໜູນຂອງໂຮງຮຽນ
- ການປະກອບສ່ວນຂອງຄອບຄົວ

ແລະ ຊຸມຊົນ

- ໂພຊະນາການ ແລະ ກິດຈະກຳທາງກາຍະພາບ
- ກິດຈະກຳຂອງການຮ່ຳຮຽນ
- ສະພາບຂອງອາຄານໂຮງຮຽນ
- ກາເຂົ້າໃຊ້ສິ່ງອຳນວຍຄວາມສະດວກ
- ຄວາມປອດໄພໃນໂຮງຮຽນ
- ການກໍ່ກວນ ຜິດຖຽງກັນ
- ຢາສູບ, ເຫຼົ້າ ແລະ ການນຳໃຊ້ຢາເສບຕິດ
- ການນຳໃຊ້ເຕັກໂນໂລຊີ
- ການລະຖິ້ມໜ້າທີ່*
- ສຸຂະພາບທາງຈິດ*
- ກິດຈະກຳທາງເພດ**

RIDE.ri.gov
Rhode Island Department of Elementary and Secondary Education

WestEd

** ຫົວຂໍ້ການສຳຫລວດໃນນັກຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ*

*** ຫົວຂໍ້ການສຳຫລວດໃນນັກຮຽນມັດທະຍົມຕອນປາຍເທົ່ານັ້ນ*

ນັກຮຽນຈຳນວນໜຶ່ງອາດຈະຮູ້ສຶກບໍ່ສະດວກໃນການຕອບຄຳຖາມບາງຂໍ້; ສະນັ້ນ ຈະມີຜູ້ໃຫ້ຄຳປຶກສາສຳລັບນັກຮຽນ ຫຼື ຜູ້ຊ່ຽວຊານທີ່ມີຄຸນນະວຸດທິ ເພື່ອຊ່ວຍເຫຼືອນັກຮຽນຜູ້ໃດກໍ່ຕາມທີ່ຮູ້ສຶກບໍ່ສະດວກ ຫຼື ຢາກປຶກສາຫາລືແບບງ່າຍໆໃນບາງຫົວຂໍ້ ຫຼື ຫົວເລື່ອງ.

ຜົນຂອງການສຳຫຼວດທີ່ສະແດງເຖິງສະພາບໂຮງຮຽນຂອງລູກຫຼານທ່ານ ແມ່ນຂຶ້ນກັບວ່າຈະມີນັກຮຽນເຂົ້າຮ່ວມການສຳຫຼວດໄດ້ຫຼາຍຊ່ຳໃດ. ທ່ານອາດຈະໃຫ້ລູກຫຼານຂອງທ່ານຢຸດຕິການສຳຫຼວດໄດ້ຕະຫລອດເວລາ ໂດຍຈະບໍ່ມີການລົງໂທດ. ຖ້າລູກຫຼານຂອງທ່ານກຳລັງດຳເນີນການສຳຫຼວດ, ລາວອາດຈະຂ້າມຄຳຖາມທີ່ລາວບໍ່ຢາກຕອບ, ຫຼື ແມ້ແຕ່ຢາກຢຸດຕິການສຳຫຼວດກໍ່ໄດ້.

ຖ້າທ່ານມີຄຳຖາມເພີ່ມເຕີມກ່ຽວກັບການສຳຫຼວດນີ້, ກະລຸນາຕິດຕໍ່ SurveyWorks Help Desk (ບ່ອນຊ່ວຍໃນການສຳຫຼວດ) ລະຫວ່າງ ເວລາ 8 ໂມງເຊົ້າ ຫາ 4 ໂມງແລງ, ຫຼື ໂທລະສັບໄປທີ່ໝາຍເລກ 1-877-787-5725 ຫຼື ເຂົ້າເບິ່ງເວັບໄຊທ໌ surveyworks@wested.org. ສຳລັບ ຄຳຖາມ ຫຼື ຂໍ້ຂ້ອງໃຈກ່ຽວກັບສິດທິຂອງລູກຫຼານທ່ານໃນຫົວຂໍ້ຂອງການຄົ້ນຄ້ວາ, ທ່ານສາມາດຕິດຕໍ່ຫາ WestEd's Office of Research Integrity (ຫ້ອງການຂອງ ເວສ໌ເອດ ເພື່ອສອບຖາມກ່ຽວກັບການຄົ້ນຄ້ວາ) ທີ່ໝາຍເລກໂທລະສັບ (877) 493-7833, ຕໍ່ 3202 ຫຼື ເຂົ້າເບິ່ງເວັບໄຊທ໌ subjects@wested.org. ຖ້າຢາກຮຽນຮູ້ເພີ່ມເຕີມກ່ຽວກັບ ເວດສ໌ເອດ, ກະລຸນາເຂົ້າເວິ່ງເວັບໄຊທ໌ www.wested.org

ຖ້າທ່ານບໍ່ຕ້ອງການໃຫ້ລູກຫຼານຂອງທ່ານເຂົ້າຮ່ວມການສຳຫຼວດ, ກະລຸນາ ຂຽນແບບຟອມທີ່ໄດ້ຄັດຕິດມານີ້ຢ່າງຮີບດ່ວນ. ຖ້າທ່ານບໍ່ສົ່ງແບບຟອມນີ້ໃຫ້ພວກເຮົາກ່ອນວັນທີ 19 ມັງກອນ 2012, ພວກເຮົາຈະຖືວ່າ ທ່ານອະນຸຍາດໃຫ້ລູກຫຼານຂອງທ່ານເຂົ້າຮ່ວມການສຳຫຼວດ. ຖ້າທ່ານປ່ຽນຄວາມຄິດຫລັງຈາກໄລຍະເວລາທີ່ກຳນົດໄວ້ນັ້ນ, ທ່ານອາດຈະສົ່ງອີເມວ໌ ຫຼື ໂທເຂົ້າຫາໂຮງຮຽນເພື່ອໃຫ້ພວກເຂົາຮັບຮູ້. ທ່ານອາດຈະສົ່ງແບບຟອມເຂົ້າໄປໃຫ້ຫ້ອງການຂອງໂຮງຮຽນດ້ວຍໂຕຂອງທ່ານເອງ, ສົ່ງທາງໄປສະນີ, ຫຼື ໃຫ້ລູກຫຼານຂອງທ່ານເອົາໄປສົ່ງໃຫ້. ກະລຸນາບອກໃຫ້ລູກຫຼານຂອງທ່ານໄດ້ຮັບຮູ້ວ່າລາວຈະຕ້ອງເຂົ້າຮ່ວມການສຳຫຼວດ ຫຼື ຈະບໍ່ເຂົ້າຮ່ວມການສຳຫຼວດ; ຖ້າບໍ່ໄດ້ເຂົ້າຮ່ວມການສຳຫຼວດ, ລາວຈະໄດ້ເຂົ້າຮ່ວມກິດຈະກຳອັນອື່ນຂອງໂຮງຮຽນໃນເວລາທີ່ມີການສຳຫຼວດ. ຂອບໃຈສຳລັບການຮ່ວມມືຂອງທ່ານໃນເວລາທີ່ສຳຄັນນີ້ດ້ວຍ.

SurveyWorks!

# ການສຳຫຼວດນັກຮຽນ ຂອງວຽກສຳຫຼວດ 2011-2012

## ແບບຟອມຄັດເລືອກອອກ

ຂຽນແບບຟອມນີ້ໃຫ້ສຳເລັດ ຖ້າທ່ານ**ບໍ່**ຕ້ອງການໃຫ້ລູກຫຼານຂອງທ່ານ ເຂົ້າຮ່ວມໃນການສຳຫຼວດ**ເທົ່ານັ້ນ**. ສົ່ງກັບຄືນໃຫ້ໂຮງຮຽນຂອງລູກຫຼານທ່ານ ກ່ອນວັນທີ 19 ມັງກອນ 2012.

------------------------------------------------------------------------------------------------

ຂ້າພະເຈົ້າ**ບໍ່ອະນຸຍາດ**ໃຫ້ລູກຫຼານຂອງຂ້າພະເຈົ້າເຂົ້າຮ່ວມໃນການສຳຫຼວດນັກຮຽນຂອງວຽກສຳຫຼວດ 2011-2012. ຂ້າພະເຈົ້າຮັບຮູ້ວ່າ ລູກຫຼານຂອງຂ້າພະເຈົ້າຈະຖືກມອບໃຫ້ເຮັດກິດຈະກຳອື່ນຢູ່ໃນຊ່ວງຂອງການສຳຫຼວດ.

ຊື່ຂອງນັກຮຽນ (ກະລຸນາໃສ່ໂຕພິມ): ______________________________________________

ຊື່ໂຮງຮຽນຂອງນັກຮຽນ (ກະລຸນາໃສໂຕພິມ): ___________________________ເກຣດ:__________

ລາຍເຊັນຂອງພໍ່ແມ່ ຫຼື ຜູ້ປົກຄອງ: ______________________________________________

ກະລຸນາສົ່ງແບບຟອມນີ້ໄປຫາຫ້ອງການຂອງໂຮງຮຽນຂອງລູກຫຼານທ່ານ ຖ້າທ່ານ**ບໍ່**ຕ້ອງການໃຫ້ລູກຫຼານຂອງທ່ານເຂົ້າຮ່ວມໃນການສຳຫຼວດ**ເທົ່ານັ້ນ**. ຖ້າທ່ານອະນຸຍາດໃຫ້ລູກຫຼານຂອງທ່ານເຂົ້າສຳຫຼວດ, ທ່ານ**ບໍ່**ຈຳເປັນຕ້ອງສົ່ງແບບຟອມນີ້. ພວກຂ້າພະເຈົ້າຂໍຂອບໃຈສຳລັບຄວາມຊ່ວຍເຫຼືອຂອງທ່ານໃນການສຳຫຼວດທີ່ສຳຄັນນີ້.